**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງພາຍໃນ

ຫ້ອງການ

ເລກທີ 291 / ຫກ

ນະຄອນຫຼວງວຽງຈັນ, ວັນທີ 24 ພະຈິກ 2023

# ໜັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ

**ເຖິງ:**.......................................................................................................

1. ຫ້ອງການ ກະຊວງພາຍໃນ ໄດ້ຮັບອະນຸມັດງົບປະມານປະຈໍາປີ 2023 ເພື່ອດໍາເນີນການປະມູນຈັດຊື້ ພິມປຶ້ມສັງລວມເອກະສານກອງປະຊຸມສະຫຼຸບຕີລາຄາຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ແລະ ປຶ້ມເນື້ອໃນການແຂ່ງຂັນ ຮັກຊາດ ແລະ ພັດທະນາ ດ້ວຍການປະມູນແບບສົມທຽບລາຄາ.
2. ຫ້ອງການ ກະຊວງພາຍໃນ ຂໍເຊີນບັນດາໂຮງພິມ/ບໍລິສັດ/ຫ້າງຮ້ານ ທີ່ດໍາເນີນກິດຈະການດ້ານການພິມ ເຂົ້າຮ່ວມຍື່ນຊອງປະມູນສົມທຽບລາຄາ ສໍາລັບການຈັດພິມປຶ້ມສັງລວມເອກະສານກອງປະຊຸມສະຫຼຸບຕີລາຄາຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ໃນຂອບເຂດທົ່ວປະເທດ (2016-2020) ແລະ ປຶ້ມເນື້ອໃນການແຂ່ງຂັນ ຮັກຊາດ ແລະ ພັດທະນາ, ໄລຍະເວລາໃນການສົ່ງມອບ ຫລື ການບໍລິການ ແມ່ນ 15 ວັນ.
3. ການປະມູນນີ້ຈະດໍາເນີນຕາມຂັ້ນຕອນການປະມູນສົມທຽບລາຄາທີ່ໄດ້ກໍານົດໄວ້ຢູ່ໃນ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ຊອງປະມູນຕ້ອງສົ່ງກ່ອນເວລາ 9:00 ໂມງ ຂອງ ວັນທີ 29 ພະຈິກ 2023 ຢູ່ຫ້ອງປະຊຸມຊັ້ນ 02 ຂອງຫ້ອງການ ກະຊວງພາຍໃນ ແລະ ຊອງປະມູນສົມທຽບລາຄາທຸກໆຊອງຈະໄດ້ເປີດໃນເວລາ 9:00 ໂມງ ຂອງວັນທີ 29 ພະຈິກ 2023 ໂດຍຊ່ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນ ທີ່ສົນໃຈຕ້ອງການເຂົ້າຮ່ວມ.

**ເຊັນແທນຫົວໜ້າຫ້ອງການ**

**ຮອງຫົວໜ້າຫ້ອງການ**

ກິແມະວົງ ອິນທະວົງ